IFAD
Enabling poor rural people
to overcome poverty

# ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ

## ຄຳແນະນຳ

## ການປະເມີນເບື້ອງຕົ້ນຜູ້ສະໝັກຂໍທຶນ

## I. ພາກສະເໜີ

ການປະເມີນເບື້ອງຕົ້ນຫົວໜ່ວຍທຸລະກິດແມ່ນຂັ້ນຕອນທີ່ນໍາໃຊ້ເພື່ອປະເມີນ ຫຼື ກວດສອບຂໍ້ມູນຂອງຫົວໜ່ວຍທຸລະກິດທີ່ສະແດງເຈດຈໍານົງໃນການສະໝັກຂໍທຶນກ່ອນການເຂົ້າຮ່ວມກິດຈະກໍາຂອງໂຄງການ ໂດຍສະເພາະການສະໝັກຂໍທຶນສົມທົບເພື່ອພັດທະນາທຸລະກິດກະສິກໍາ. ການປະເມີນດັ່ງກ່າວເປັນສ່ວນໜຶ່ງອັນສໍາຄັນຂອງການຄັດເລືອກຫົວໜ່ວຍທຸລະກິດໃນການສະໝັກຂໍທຶນສົມທົບສໍາລັບພັດທະນາທຸລະກິດກະສິກໍາ ແລະ ຂັ້ນຕອນດັ່ງກ່າວຕ້ອງໄດ້ຮັບການປະຕິບັດກ່ອນເຂົ້າສູ່ຂັ້ນຕອນການຄັດເລືອກຜູ້ສະໝັກຂໍທຶນ ເພື່ອຮັບປະກັນວ່າໂຄງການປຶກສາຈະສາມາດຄັດເລືອກ ແລະ ເລີ່ມຕົ້ນການຮ່ວມມືກັບຫົວໜ່ວຍທຸລະກິດທີ່ມີທ່າແຮງ ແລະ ມີຄວາມເປັນໄປໄດ້ໃນການສ້າງຜົນໄດ້ຮັບໃຫ້ແກ່ກຸ່ມເປົ້າໝາຍຂອງໂຄງການ.

ຄໍາແນະນໍາສະບັບນີ້ສ້າງຂຶ້ນມາເພື່ອອໍານວຍຄວາມສະດວກ ແລະ ເປັນທິດທາງໃຫ້ແກ່ຊ່ຽວຊານພັດທະນາຂັ້ນແຂວງ ແລະ ທີມງານພັດທະນາທຸລະກິດກະສິກໍາເຊິ່ງຈະເປັນຜູ້ທີ່ເຮັດວຽກໂດຍກົງກັບຫົວໜ່ວຍທຸລະກິດໃນການປະເມີນ ແລະ ກໍານົດວ່າຫົວໜ່ວຍທຸລະກິດດັ່ງກ່າວຄວນໄດ້ຮັບການຄັດເລືອກໃຫ້ເຂົ້າສູ່ຂະບວນການສະໝັກຂໍທຶນຈາກໂຄງການຫຼືບໍ່. ນອກຈາກນັ້ນ, ຄໍາແນະນໍາດັ່ງກ່າວຍັງອອກແບບມາເພື່ອປະເມີນ ຫຼື ກວດສອບວ່າຫົວໜ່ວຍທຸລະກິດຍັງມີວິຊາການດ້ານໃດທີ່ມີຄວາມຈໍາເປັນຕ້ອງໄດ້ຮັບການຊ່ວຍເຫຼືອ ແລະ ປັບປຸງກ່ອນການເຂົ້າສູ່ຂັ້ນຕອນການສະໝັກຂໍທຶນຈາກໂຄງການປຶກສາ. ພາຍຫຼັງການປະເມີນແລ້ວ, ທີມງານພັດທະນາທຸລະກິດກະສິກໍາຂອງໂຄງການຈະໃຫ້ຄໍາເຫັນຕໍ່ກັບຜົນການປະເມີນດັ່ງກ່າວ.

## II. ເປົ້າໝາຍຂອງການປະເມີນເບື້ອງຕົ້ນຫົວໜ່ວຍທຸລະກິດ

ເປົ້າໝາຍຫຼັກຂອງການປະເມີນເບື້ອງຕົ້ນຫົວໜ່ວຍທຸລະກິດແມ່ນເພື່ອອໍານວຍຄວາມສະດວກ ແລະ ເປັນທິດທາງໃຫ້ແກ່ການຄັດເລືອກວ່າຫົວໜ່ວຍທຸລະກິດກ່ອນການກໍານົດກອບການຮ່ວມມືພາຍໃຕ້ກອງທຶນສົມທົບສໍາລັບພັດທະນາທຸລະກິດກະສິກໍາໃນຮູບການທີ່ຈະສາມາດພັດທະນາລະບົບຕ່ອງໂສ້ມູນຄ່າໄດ້. ເພື່ອຮັບປະກັນວ່າຫົວໜ່ວຍທຸລະກິດທີ່ໄດ້ຮັບການຄັດເລືອກຈະມີຄວາມສາມາດພຽງພໍໃນການຈັດຕັ້ງປະຕິບັດໂຄງການຂໍທຶນໃຫ້ປະສົບຜົນສໍາເລັດ ແລະ ທັງເປັນການຮັບປະກັນວ່າໂຄງການຂໍທຶນດັ່ງກ່າວຈະສາມາດສ້າງຜົນປະໂຫຍດໃຫ້ແກ່ກຸ່ມເປົ້າໝາຍຂອງໂຄງການ.

## III. ເຄື່ອງມື ແລະ ຂັ້ນຕອນການຈັດຕັ້ງປະຕິບັດ

ການປະເມີນເບື້ອງຕົ້ນຫົວໜ່ວຍທຸລະກິດຈະໄດ້ຮັບການຈັດຕັ້ງປະຕິບັດໂດຍທີມງານພັດທະນາທຸລະກິດກະສິກໍາ ໃນເວລາທີ່ມີຫົວໜ່ວຍທຸລະກິດສະແດງເຈດຈໍານົງໃນການສະໝັກຂໍທຶນ. ພາຍຫຼັງທີ່ໄດ້ຮັບການພົວພັນຈາກຫົວໜ່ວຍທຸລະກິດແລ້ວ, ທີມງານພັດທະນາທຸລະກິດກະສິກໍາຈະມີການຮຽກປະຊຸມກັບຫົວໜ່ວຍທຸລະກິດດັ່ງກ່າວເພື່ອອະທິບາຍກ່ຽວກັບເຫດຜົນ ແລະ ຂັ້ນຕອນການປະເມີນເບື້ອງຕົ້ນຫົວໜ່ວຍທຸລະກິດ ພ້ອມທັງກະກຽມການລົງປະເມີນຕົວຈິງຢູ່ພາກສະໜາມ (ປະເມີນສິ່ງອໍານວຍຄວາມສະດວກ). ດັ່ງນັ້ນຈຶ່ງມີຄວາມຈໍາເປັນຢ່າງຍິ່ງທີ່ທີມງານຕ້ອງມີຄວາມເຂົ້າໃຈຂັ້ນຕອນການປະເມີນດັ່ງກ່າວຢ່າງຈະແຈ້ງ.

ພາຍຫຼັງທີ່ຫົວໜ່ວຍທຸລະກິດມີຄວາມເຂົ້າໃຈກ່ຽວກັບເຫດຜົນ ແລະ ຂັ້ນຕອນຂອງການປະເມີນແລ້ວ, ການປະເມີນເບື້ອງຕົ້ນຫົວໜ່ວຍທຸລະກິດຈະໄດ້ຮັບການຈັດຕັ້ງປະຕິບັດພາຍຫຼັງການສົນທະນາໂດຍອີງໃສ່ມາດຖານການປະເມີນພາຍຫຼັງເຫັນດີເປັນເອກະພາບກັບຫົວໜ່ວຍທຸລະກິດແລ້ວ. ພາຍຫຼັງການລົງປະເມີນ

ພາກສະໜາມແລ້ວ, ທີມງານທີ່ຈະລົງປະເມີນຄວນຈັດກອງປະຊຸມເພື່ອປຶກສາຫາລືກັນ, ວິເຄາະຂໍ້ມູນ ແລະ ລົງຄຳເຫັນກ່ຽວກັບຜົນໄດ້ຮັບຂອງການລົງປະເມີນດັ່ງກ່າວ. ຖ້າຫາກວ່າຫົວໜ່ວຍທຸລະກິດຜ່ານການປະເມີນ, ທີມງານຈະແຈ້ງໃຫ້ຄະນະກຳມະການພັດທະນາເສດຖະກິດ-ສັງຄົມເມືອງເພື່ອຮັບຊາບ.

ຖ້າຫາກວ່າຫົວໜ່ວຍທຸລະກິດຜ່ານການປະເມີນ, ທີມງານຈະແຈ້ງຜົນການປະເມີນໃຫ້ແກ່ຫົວໜ່ວຍທຸລະກິດດັ່ງກ່າວໄດ້ຮັບຊາບ, ແລະ ອຳນວຍຄວາມສະດວກໃຫ້ແກ່ເຂົາເຈົ້າໃນການເຂົ້າສູ່ຂັ້ນຕອນການສະໝັກຂໍທຶນ. ກົງກັນຂ້າມ, ຖ້າຫາກວ່າບໍ່ຜ່ານການປະເມີນ, ຫົວໜ່ວຍທຸລະກິດດັ່ງກ່າວຈະໄດ້ຮັບຄຳແນະນຳເພື່ອປັບປຸງເພື່ອໃຫ້ໄດ້ຕາມເງື່ອນໄຂການສະໝັກຂໍທຶນ.

## ມາດຖານການປະເມີນເບື້ອງຕົ້ນຫົວໜ່ວຍທຸລະກິດ

ລຸ່ມນີ້ແມ່ນມາດຖານການປະເມີນທີ່ຊ່ຽງຊານພັດທະນາຂັ້ນແຂວງ ແລະ ທີມງານພັດທະນາທຸລະກິດກະສິກຳຈະນຳໃຊ້ເພື່ອປະເມີນຄວາມສາມາດ ແລະ ຄວາມພ້ອມໃນການເຂົ້າສູ່ຂັ້ນຕອນການສະໝັກຂໍທຶນຂອງຫົວໜ່ວຍທຸລະກິດ ເຊິ່ງປະກອບມີ 5 ມາດຖານຫຼັກດັ່ງລຸ່ມນີ້:.

1. ການປະເມີນກ່ຽວກັບການສ້າງຕັ້ງທຸລະກິດ;
2. ການປະເມີນຄວາມສາມາດດ້ານການບໍລິຫານ ແລະ ການດຳເນີນງານ;
3. ການປະເມີນດ້ານຜົນກະທົບຕໍ່ສິ່ງແວດລ້ອມ;
4. ການປະເມີນຄວາມສາມາດດ້ານວິຊາການ;
5. ການປະເມີນສະພາບທາງການເງິນ ໂດຍສະເພາະຄວາມສາມາດໃນການສົມທົບທຶນກັບໂຄງການ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ແຂວງ:...........................**

**ເມືອງ:...........................**

**ໂຄງການຊົນລະກະເສດ ແລະ**

**ການຜະລິດເປັນສິນຄ້າຂະໜາດນ້ອຍ**

## ແບບຟອມການປະເມີນເບື້ອງຕົ້ນຫົວໜ່ວຍທຸລະກິດ

ຊື່ໂຄງການຂໍທຶນ: ..........................................................................................................................

**ຊື່ເຈົ້າຂອງຫົວໜ່ວຍທຸລະກິດ:** .............................................. **ຊື່ຫົວໜ່ວຍທຸລະກິດ:** ......................................................

Business registration number: ........................................... Business location: ..........................................

Contact details: ...........................................................................................................................

ການປະເມີນເບື້ອງຕົ້ນຫວໜ່ວຍທຸລະກິດແມ່ນເພື່ອປະເມີນຄວາມສາມາດຂອງຫົວໜ່ວຍທຸລະກິດເພື່ອເຮັດໃຫ້ການຈັດຕັ້ງປະຕິບັດບົດສະເໜີຂໍທຶນຂອງຕົນປະສົບຜົນສຳເລັດ ເຊິ່ງຈະສາມາດສ້າງຜົນປະໂຫຍດໃຫ້ແກ່ກຸ່ມເປົ້າໝາຍຂອງໂຄງການຊົນລະກະເສດ ແລະ ສົ່ງເສີມການຜະລິດເປັນສິນຄ້າຂະໜາດນ້ອຍໄດ້.

**ມາດຖານການປະເມີນແມ່ນຈະໄດ້ຮັບການປະຕິບັດຕາມແຕ່ລະມາດຖານລຸ່ມນີ້. ກະລຸນາໝາຍເອົາຄຳຕອບ (√) ທີ່ເຫັນວ່າເປັນຄຳຕອບທີ່ເໝາະສົມ.**

| ມາດຖານການປະເມີນ | ຜ່ານ | ບໍ່ຜ່ານ | ຕ້ອງໄດ້ປັບປຸງ* |
|---|---|---|---|
| **1. ການປະເມີນກ່ຽວກັບການສ້າງຕັ້ງທຸລະກິດ** | ☐ | ☐ | ☐ |
| 1.1 ຫົວໜ່ວຍທຸລະກິດມີການຈົດທະບຽນທີ່ຖືກຕ້ອງຕາມກົດໝາຍຫຼືບໍ່? | ☐ | ☐ | ☐ |
| 1.2 ຫົວໜ່ວຍທຸລະກິດມີໃບແຈ້ງເສຍອາກອນ ແລະ ໃບຢັ້ງຢືນການເສຍອາກອນຫຼືບໍ່? | ☐ | ☐ | ☐ |
| 1.3 ຫົວໜ່ວຍທຸລະກິດມີໄລຍະເວລາໃນການດຳເນີນທຸລະກິດກະສິກຳຫຼາຍກວ່າ 6 ເດືອນຫຼືບໍ່? | ☐ | ☐ | ☐ |

| | | | |
|---|---|---|---|
| 1.4 ຫົວໜ່ວຍທຸລະກິດຢູ່ລະຫວ່າງການດຳເນີນຄະດີ ຫຼື ກຳລັງຈະມີການເຂົ້າສູ່ການດຳເນີນຄະດີຫຼືບໍ? | ☐ | ☐ | ☐ |
| **2. ການປະເມີນຄວາມສາມາດດ້ານການບໍລິຫານ ແລະ ການດຳເນີນງານ** | | | |
| 2.1 ຜູ້ບໍລິຫານ ຫຼື ເຈົ້າຂອງຫົວໜ່ວຍທຸລະກິດມີປະສົບການໃນການບໍລິຫານທຸລະກິດກະສິກຳຫຼືບໍ? | ☐ | ☐ | ☐ |
| 2.2 ຫົວໜ່ວຍທຸລະກິດມີຄວາມສາມາດ ແລະ ປະສົບການໃນການສົ່ງເສີມການຜະລິດກະສິກຳ ແລະ ການເຊື່ອມໂຍງກະສິກອນສູ່ຕະຫຼາດຫຼືບໍ? ເຊັ່ນ: ການເຮັດສັນຍາເກັບຊື້ຜົນຜະລິດ | ☐ | ☐ | ☐ |
| 2.3 ຫົວໜ່ວຍທຸລະກິດມີຄວາມຕ້ອງການທີ່ແນ່ນອນ ຫຼື ມີຄວາມຕ້ອງການຊື້ຜົນຜະລິດທີ່ເພີ່ມຂຶ້ນຫຼືບໍ? | ☐ | ☐ | ☐ |
| 2.4 ຫົວໜ່ວຍທຸລະກິດມີຄວາມສ່ຽງດ້ານການຕະຫຼາດຫຼືບໍ?ຖ້າມີ, ເຂົາເຈົ້າມີແຜນເພື່ອຫຼຸດຜ່ອນຄວາມສ່ຽງເຫຼົ່ານັ້ນຫຼືບໍ? | ☐ | ☐ | ☐ |
| 2.5 ຫົວໜ່ວຍທຸລະກິດມີແຜນການ ຫຼື ຈະມີແຜນປັບປຸງສະຖານທີ່ເຮັດວຽກ ແລະ ສະພາບແວດລ້ອມຂອງການເຮັດວຽກເພື່ອໃຫ້ສາມາດປັບປຸງການດຳເນີນງານຫຼືບໍ? | ☐ | ☐ | ☐ |
| 2.6 ຫົວໜ່ວຍທຸລະກິດມີອຸປະກອນຮັກສາຄວາມປອດໄພສຳລັບພະນັກງານຫຼືບໍ? ລວມທັງອຸປະກອນປ້ອງກັນອຸປະຕິເຫດແຮງງານ. | ☐ | ☐ | ☐ |
| 2.7 ຫົວໜ່ວຍທຸລະກິດມີເປົ້າໝາຍໃນການສ້າງຜົນປະໂຫຍດ ຫຼື ສ້າງລາຍຮັບໃຫ້ແກ່ກຸ່ມກະສິກອນຫຼືບໍ? ເຊັ່ນ: ມີແຜນຈະເຮັດສັນຍາເກັບຊື້ຜົນຜະລິດກັບກຸ່ມກະສິກອນຂອງໂຄງການປຶກຊາ. | ☐ | ☐ | ☐ |
| **3. ການປະເມີນດ້ານຜົນກະທົບຕໍ່ສິ່ງແວດລ້ອມ** | | | |
| 3.1 ກິດຈະການຂອງຫົວໜ່ວຍທຸລະກິດມີຜົນກະທົບຕໍ່ສິ່ງແວດລ້ອມຫຼືບໍ? ມີການສ້າງມົນລະພິດ ຫຼື ເຮັດໃຫ້ສິ່ງແວດລ້ອມເສື່ອມສະພາບຫຼືບໍ? | ☐ | ☐ | ☐ |
| 3.2 ຫົວໜ່ວຍທຸລະກິດມີການປ່ອຍນ້ຳເສຍລົງສູ່ແຫຼ່ງນ້ຳຊຸມຊົນ ຫຼື ແຫຼ່ງນ້ຳທຳມະຊາດກ່ອນການບຳບັດຫຼືບໍ? | ☐ | ☐ | ☐ |
| 3.3 ກິດກະກຳທີ່ຫົວໜ່ວຍທຸລະກິດຈະສົ່ງເສີມມີຄວາມສາມາດໃນການປັບໂຕໃຫ້ເຂົ້າກັບການປ່ຽນແປງສະພາບແວດລ້ອມ ຫຼື ມີຄວາມສາມາດຟື້ນຟູຕໍ່ການປ່ຽນແປງສະພາບແວດລ້ອມຫຼືບໍ? (ທົນທານຕໍ່ໄະແຫ້ງແລ້ງ, ໄພນ້ຳຖ້ວມ) | ☐ | ☐ | ☐ |
| **4. ການປະເມີນຄວາມສາມາດດ້ານວິຊາການ** | | | |
| 4.1 ຫົວໜ່ວຍທຸລະກິດມີພະນັກງານທີ່ມີປະສົບການດ້ານການປຸງແຕ່ງຜົນຜະລິດເພື່ອເພີ່ມມູນຄ່າຫຼືບໍ? | ☐ | ☐ | ☐ |
| 4.2 ຫົວໜ່ວຍທຸລະກິດໄດ້ມີການລົງທຶນດ້ານເຕັກໂນໂລຊີທີ່ຈະສາມາດນຳໃຊ້ເຂົ້າໃນໂຄງການຂໍທຶນຫຼືບໍ? | ☐ | ☐ | ☐ |
| 4.3 ຫົວໜ່ວຍທຸລະກິດມີການນຳໃຊ້ເຕັກໂນໂລີ ຫຼື ເຕັກນິກທີ່ເໝາະສົມກັບກິດຈະການຫຼືບໍ? ເຊັ່ນ: ເຄື່ອງຈັກສຳລັບຄັດເກຣດຄຸນນະພາບສິນຄ້າ | ☐ | ☐ | ☐ |
| **5. ການປະເມີນສະພາບທາງການເງິນ** | | | |
| 5.1 ຫົວໜ່ວຍທຸລະກິດມີສະພາບທາງການເງິນທີ່ດີຫຼືບໍ? | ☐ | ☐ | ☐ |

| | | | |
|---|---|---|---|
| 5.2 ຫົວໜ່ວຍທຸລະກິດມີລະບົບການເງິນທີ່ເໝາະສົມ ແລະ ມີການຖືບັນຊີການເງິນຫຼືບໍ່? | ☐ | ☐ | ☐ |
| 5.3 ຫົວໜ່ວຍທຸລະກິດມີສະພາບການເງິນທີ່ຄຸ້ມຄ່າຕໍ່ການລົງທຶນຫຼືບໍ່? | ☐ | ☐ | ☐ |
| 5.4 ຫົວໜ່ວຍທຸລະກິດມີຄວາມພ້ອມໃນການເຂົ້າຮ່ວມສົມທົບທຶນເຂົ້າໃນໂຄງການຂໍທຶນຫຼືບໍ່? | ☐ | ☐ | ☐ |

**ຜົນການປະເມີນດ້ານວິຊາການ ແລະ ຄໍາສະເໜີຂອງທີມງານ:**

……………………………………………………………………………………………………………………………

……………………………………………………………………………………………………………………………

……………………………………………………………………………………………………………………………

……………………………………………………………………………………………………………………………

| ທີມງານປະເມີນຜົນ | ລາຍເຊັນ |
|---|---|
| ຊື່………………………………………………………….....<br>ຕໍາແໜ່ງ…………………………………………………...<br>ອົງການຈັດຕັ້ງ……………………………………………… | |
| ຊື່………………………………………………………….....<br>ຕໍາແໜ່ງ…………………………………………………...<br>ອົງການຈັດຕັ້ງ……………………………………………… | |
| ຊື່………………………………………………………….....<br>ຕໍາແໜ່ງ…………………………………………………...<br>ອົງການຈັດຕັ້ງ……………………………………………… | |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ແຂວງ:.....................**
**ເມືອງ: .......................**
**ໂຄງການຊົນລະກະເສດ ແລະ**
**ການຜະລິດເປັນສິນຄ້າຂະໜາດນ້ອຍ**

# ບົດລາຍງານການປະເມີນເບື້ອງຕົ້ນຫົວໜ່ວຍທຸລະກິດ

ຊື່ບົດສະເໜີໂຄງການຂໍທຶນ: ........................................................................................................................

ຊື່ເຈົ້າຂອງວິສາຫະກິດ: ........................................................... ຊື່ວິສາຫະກິດ: .....................................................

ທະບຽນວິສາຫະກິດເລກທີ: .......................................... ທີ່ຢູ່ຂອງວິສາຫະກິດ: ........................................................

ໝາຍເລກໂທລະສັບ:.....................................................................................................................................

## I. ຂໍ້ມູນທົ່ວໄປກ່ຽວກັບການປະເມີນເບື້ອງຕົ້ນ

[ໃຫ້ບັນຍາຍ 1 ເຖິງ 2 ວັກ ກ່ຽວກັບວັນທີລົງປະເມີນ, ຜູ້ເຂົ້າຮ່ວມ, ມາຈາກພາກສ່ວນໃດແດ່ ເປັນຕົ້ນ]

## II. ລາຍລະອຽດກ່ຽວກັບວິສາຫະກິດ

[ໃຫ້ບັນຍາຍ 1 ເຖິງ 2 ວັກ ກ່ຽວກັບລາຍລະອຽດຂອງວິສາຫະກິດເຊັ່ນ: ຊື່ວິສາຫະກິດ, ທະບຽນວິສາຫະກິດເລກທີ, ຊື່ເຈົ້າຂອງ ແລະ ທີ່ຢູ່ຕິດຕໍ່, ຊື່ໂຄງການຂໍທຶນ, ຄາດຄະເນຈຳນວນກຸ່ມຜະລິດທີ່ຈະເຮັດສັນຍາເກັບຊື້, ຈຳນວນຜົນຜະລິດ (ໂຕນ), ຄາດຄະເນຜົນໄດ້ຮັບຂອງວິສາຫະກິດພາຍຫຼັງໄດ້ຮັບທຶນ ແລະ ອື່ນໆ.....]

## III. ຜົນການປະເມີນເບື້ອງຕົ້ນ

[ໃຫ້ຕື່ມຂໍ້ມູນກ່ຽວກັບການສົນທະນາ ແລະ ການວິເຄາະຂອງທີມງານຕາມແຕ່ລະມາດຖານດັ່ງໃນຕາຕະລາງລຸ່ມນີ້]

| ມາດຖານ | ລາຍລະອຽດການວິເຄາະ |
| --- | --- |

| | |
|---|---|
| ມາດຖານທີ 1: ການປະເມີນ ກ່ຽວກັບການສ້າງຕັ້ງວິສາຫະກິດ | ພາກນີ້ໃຫ້ທີມງານບັນຍາຍ/ອະທິບາຍກ່ຽວກັບສິ່ງທີ່ທີມງານໄດ້ສົນທະນາກັນ, ສິ່ງທີ່ໄດ້ວິເຄາະ ແລະ ຜົນຂອງການວິເຄາະ<br><br>[ໝາຍເຫດ: ໃຫ້ສຳເນົາໃບທະບຽນວິສາຫະກິດ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງມາພ້ອມເຊັ່ນ: ໃບອາກອນ, ໃບຢັ້ງຢືນການເສຍອາກອນ ເປັຍຕົ້ນ] |
| ມາດຖານທີ 2: ການປະເມີນ ກ່ຽວກັບຄວາມສາມາດໃນການດຳເນີນກິດຈະການ ແລະ ການບໍລິຫານກິດຈະການ | ພາກນີ້ໃຫ້ທີມງານບັນຍາຍ/ອະທິບາຍກ່ຽວກັບສິ່ງທີ່ທີມງານໄດ້ສົນທະນາກັນ, ສິ່ງທີ່ໄດ້ວິເຄາະ ແລະ ຜົນຂອງການວິເຄາະ<br><br>[ເຊັ່ນ: ຄວາມສາມາດດ້ານການບໍລິຫານການເງິນ, ການວາງແຜນທຸລະກິດ, ຄວາມສາມາດດ້ານການຕະຫຼາດ] |
| ມາດຖານທີ 3: ການປະເມີນ ດ້ານສິ່ງແວດລ້ອມ | ພາກນີ້ໃຫ້ທີມງານບັນຍາຍ/ອະທິບາຍກ່ຽວກັບສິ່ງທີ່ທີມງານໄດ້ສົນທະນາກັນ, ສິ່ງທີ່ໄດ້ວິເຄາະ ແລະ ຜົນຂອງການວິເຄາະ<br><br>[ໝາຍເຫດ: ໃຫ້ມີໃບຢັ້ງຢືນດ້ານສິ່ງແວດລ້ອມຈາກຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຄັດຕິດມາພ້ອມ, ຖ້າມີ] |
| ມາດຖານທີ 4: ຄວາມສາມາດ ດ້ານວິຊາການທີ່ກ່ຽວຂ້ອງກັບທຸລະກິດ | ພາກນີ້ໃຫ້ທີມງານບັນຍາຍ/ອະທິບາຍກ່ຽວກັບສິ່ງທີ່ທີມງານໄດ້ສົນທະນາກັນ, ສິ່ງທີ່ໄດ້ວິເຄາະ ແລະ ຜົນຂອງການວິເຄາະ<br><br>[ເຊັ່ນ: ດ້ານສົ່ງເສີມການຜະລິດ ຫຼື ດ້ານອື່ນໆ......] |
| ມາດຖານທີ 5: ຄວາມສາມາດ ດ້ານການເງິນ | ພາກນີ້ໃຫ້ທີມງານບັນຍາຍ/ອະທິບາຍກ່ຽວກັບສິ່ງທີ່ທີມງານໄດ້ສົນທະນາກັນ, ສິ່ງທີ່ໄດ້ວິເຄາະ ແລະ ຜົນຂອງການວິເຄາະ<br><br>[ເຊັ່ນ: ສະພາບທາງການເງິນ, ໜີ້ຕ້ອງຮັບ, ມູນຄ່າສິນຄ້າໃນສາງ ......]<br>[ໝາຍເຫດ: ໃຫ້ຄັດຕິດໃບຢັ້ນຢືນຖານະທາງການເງິນມາພ້ອມ, ຖ້າມີ] |

## IV. ພາກສະຫຼຸບ ແລະ ໃຫ້ຄຳເຫັນ

[ໃນພາກນີ້ໃຫ້ທີມງານຂຽນບົດສະຫຼຸບກ່ຽວກັບຜົນການປະເມີນເບື້ອງຕົ້ນດັ່ງກ່າວ ແລະ ໃຫ້ຄຳເຫັນວ່າວິສາຫະກິດດັ່ງກ່າວຄວນຜ່ານເກນການປະເມີນຫຼືບໍ່? ມີຄວາມສາມາດດ້ານໃດທີ່ເຂົາເຈົ້າຕ້ອງໄດ້ຮັບການຝຶກອົບຮົມຫຼືບໍ?ຖ້າມີການລົງຄຳເຫັນວ່າໃຫ້ຜ່ານການປະເມີນ, ວິສາຫະກິດດັ່ງກ່າວຄວນເຂົ້າສູ່ຂັ້ນຕອນຕໍ່ໄປຂອງການສະໝັກຂໍທຶນໄດ້]

| ທີມງານປະເມີນຜົນ | ລາຍເຊັນ |
|---|---|

| | |
|---|---|
| ຊື່..........................................................................<br>ຕຳແໜ່ງ...........................................................<br>ອົງການຈັດຕັ້ງ..................................................... | |
| ຊື່..........................................................................<br>ຕຳແໜ່ງ...........................................................<br>ອົງການຈັດຕັ້ງ..................................................... | |
| ຊື່..........................................................................<br>ຕຳແໜ່ງ...........................................................<br>ອົງການຈັດຕັ້ງ..................................................... | |